**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

*ຮ່າງ*

# ບົດບັນທຶກ

## ກອງປະຊຸມ ສຸກເສີນໄພນໍ້າຖ້ວມ ຄັ້ງວັນທີ 17 ກັນຍາ 2018

ການດໍາເນີນກອງປະຊຸມໄດ້ຈັດຂຶ້ນໃນເວລາ 10:00 ໂມງ ຂອງວັນທີ 17 ກັນຍາ 2018 ພາຍໃຕ້ການເປັນປະທານຂອງ ດຣ ບຸນທນັກ ໄຊຊະນະສົງຄາມ ຫົວຫນ້າກົມປິ່ນປົວ ແລະ ຟື້ນຟູຫນ້າທີ່ການ ໂດຍມີບັນດາກົມ, ສູນ, ກອງເລຂາຂອງກະຊວງສາທາລະນະສຸກ ແລະ ຕົວແທນຈາກ ອົງການ WHO, UNICEF, UNFPA,IOM ເຂົ້າຮ່ວມລວມທັງໝົດ 20 ທ່ານ, 7 ຍິງ ທ່ານ. ລາຍລະອຽດ ລາຍຊື່ຜູ້ເຂົ້າຮ່ວມແມ່ນໄດ້ຄັດຕິດມາພ້ອມນີ້.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບວຽກງານແຕ່ລະດ້ານໃນມື້ທີ່ຜ່ານມາ ແລະ ແຜນການວຽກຈຸດສຸມສໍາລັບມື້ຕໍ່ໄປ ຈາກບັນດາ ກົມ, ສູນ ອ້ອມຂ້າງກະຊວງສາທາລະນະສຸກ ແລະ ຄູ່ຮ່ວມພັດທະນາ. ລາຍລະອຽດມີດັ່ງລຸ່ມນີ້:

## I. ການລາຍງານຂອງບັນດາແຜນງານ:

## 1. ແຜນອະນາໄມ ແລະ ສົ່ງເສີມສຸຂະພາບ:

- ❖ **ວຽກງານນໍ້າ , ສຸຂະພິບານ ແລະ ອະນາໄມສິ່ງແວດລ້ອມ**
  - ໄດ້ຈັດຕັ້ງປະຕິບັດຂຸດຂຸມບໍາບັດນໍ້າເສຍຢູ່ຈຸດເຮືອນສາຍໃໝ ຈໍານວນ 2 ຂຸມ

| ລ/ດ | ສະຖານທີ່ | ສະບົບນໍ້າ | | | | | | ວິດຖ່າຍ | | | ຫ້ອງນໍ້າເຄື່ອນທີ່ | ຂຸມເກັບນໍ້າເປື້ອນ |
|---|---|---|---|---|---|---|---|---|---|---|---|---|
| | | ນໍ້າບາດານ | | ສ້າງໃໝ່ | ນໍ້າສ້າງ | | ສ້າງໃໝ່ | ຄົງທີ່ | | ສ້າງໃໝ່ | | |
| | | ໃຊ້ໄດ້ | ໃຊ້ບໍ່ໄດ້ | | ໃຊ້ໄດ້ | ໃຊ້ບໍ່ໄດ້ | | ໃຊ້ໄດ້ | ໃຊ້ບໍ່ໄດ້ | | | |
| 1 | ມັດທະຍົມສະໜາມໄຊ | 4 | 0 | 2 | 2 | 0 | 0 | 45 | 2 | 29 | 0 | 0 |
| 2 | ໂຮງຮຽນປະຖົມມິດສໍາພັນ | 2 | 0 | 1 | 1 | 0 | 0 | 23 | 1 | 14 | 0 | 2 |
| 3 | ໂຮງຮຽນອະນຸບານກາເດັ້ນ | 2 | 1 | 1 | 0 | 0 | 0 | 6 | 5 | 4 | 0 | 1 |
| 4 | ຫ້ອງວ່າການປົກຄອງ | 1 | 0 | 1 | 1 | 0 | 0 | 9 | 0 | 2 | 0 | 0 |
| 5 | ໂຮງຮຽນອຸດົມໄຊ | 2 | 0 | 1 | 0 | 0 | 0 | 20 | 3 | 14 | 0 | 0 |
| 6 | ບ້ານບົກ | 4 | 0 | 6 | 0 | 0 | 0 | 15 | 0 | 17 | 0 | 0 |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| 7 | ໂຮງໝໍ-ຫ້ອງການສາທາ | 3 | 0 | 1 | 0 | 0 | 0 | 15 | 0 | 4 | 0 | 1 |
| 8 | ຫ້ອງການບ້ານມິດສຳພັນ | 0 | 1 | 1 | 1 | 0 | 0 | 6 | 0 | 5 | 0 | 1 |
| 9 | ບ້ານ ປີນດົງ | 6 | 2 | 5 | 1 | 0 | 1 | 20 | 1 | 20 | 0 | 0 |
| 10 | ບ້ານ ຕະມໍ່ຍອດ | 6 | 0 | 5 | 0 | 0 | 0 | 22 | 0 | 20 | 0 | 0 |
| 11 | ບ້ານໃໝ່ (ແຄ້ມທະຫານ) | 0 | 2 | 0 | 0 | 0 | 0 | 0 | 8 | 0 | 0 | 0 |
| 12 | ສະໜາມແດງ | 1 | 0 | 0 | 0 | 0 | 0 | 1 | 0 | 0 | 0 | 0 |
| 13 | ໂຮງຮຽນ ມສ ຈັນທາ | 1 | 1 | 0 | 0 | 0 | 0 | 9 | 0 | 0 | 0 | 0 |
| 14 | ຫ້ອງການບ້ານທ່າເດື່ອ | 0 | 0 | 0 | 0 | 0 | 0 | 1 | 0 | 0 | 0 | 0 |
| | ລວມທັງໝົດ | 32 | 7 | 23 | 6 | 0 | 1 | 192 | 20 | 129 | 0 | 5 |

❖ **ວຽກງານ ແມ່ ແລະ ເດັກ ແລະ ໂພສະນາການ**

- ໃຫ້ບໍລິການຢູ່ຈຸດຕະມໍ່ຍອດ ແລະ ຈຸດປີນດົງ.
- ລົງກັ່ນຕ່ອງຊອກຫາເດັກຂາດສານອາຫານ ຮ່ວມກັບອົງການ ຢູນິເຊັບ ຢູ່ຈຸດປີນດົງ.

➢ **ວຽກງານແມ່ ແລະ ເດັກ**

| ລຳດັບ | ລາຍການ | ຈຳນວນບໍລິການ ສະສົມຜ່ານມາ | ຈຳນວນບໍລິການ ໃໝ່ | ຈຳນວນບໍລິການ ສະສົມທັງໝົດ |
|---|---|---|---|---|
| 1 | ກວດທ້ອງແມ່ມານ | 483 | 0 | 483 |
| 2 | ກວດຫຼັງເກີດ | 39 | 3 | 42 |
| 3 | ເກີດລູກ | 13 | 2 | 15 |
| 4 | ບໍລິການວາງແຜນຄອບຄົວ | 734 | 1 | 735 |
| 5 | ທາດເຫຼັກແມ່ມານ | 241 | 0 | 241 |
| 6 | ທາດເຫຼັກທິດລະເມັດ | 275 | 0 | 275 |
| | ລວມການບໍລິການ | 1,785 | 6 | 1,791 |

- **ຕົວເລກວຽກງານສັກຢາກັນພະຍາດ ແລະ ວຽກງານໂພສະນາການແມ່ນຍັງເປັນຕົວເລກເກົ່າຂອງວັນທີ 15 ກັນຍາ 2018 ເນື່ອງຈາກວ່າບໍ່ມີຜູ້ມາໄຊ້ບໍລິການ.**

## 2. ແຜນງານຄວບຄຸມພະຍາດຕິດຕໍ່

- ທີມງານລົງເກັບກຳຂໍ້ມູນ ໃນ 1 ຈຸດບໍລິການ ຄື: 1. ໂຮງໝໍເມືອງ, ໂຮງຮຽນປະຖົມ, ໂຮງຮຽນອະນຸບານ ແລະ ຫ້ອງການບ້ານມິດສຳພັນ
- ໄດ້ຮັບລາຍງານປະຈຳວັນ ຈາກຈຸດອົບພະຍົບບ້ານບິກ, ບ້ານບິນດົງ ແລະ ບ້ານຕະມໍ່ຍອດ ໂດຍແມ່ນທີມງານແພດປະຈຳສະໜາມເປັນຜູ້ລາຍງານໃນແຕ່ລະຈຸດ.
- ໄດ້ວິເຄາະຂໍ້ມູນ ຕາມບຸກຄົນ, ເວລາ ແລະ ສະຖານທີ່ ສຳລັບ 15 ພະຍາດເຝົ້າລະວັງ ທີ່ໄດ້ຈາກແຕ່ລະຈຸດເຝົ້າລະວັງ ແລະ ໄດ້ອອກແບບວິທີການນຳສະເໜີຂໍ້ມູນ.
- ໄດ້ເຮັດສຸຂະສຶກສາຕາມເສັ້ນທາງລະຫວ່າງບ້ານດອນມ່ວງ ແລະ ບ້ານບິກ ເພື່ອປ້ອງກັນ ແລະ ຄວບຄຸມທຳລາຍແຫຼ່ງເພາະພັນຂອງຍຸງລາຍ.

➢ ປະເມີນຄວາມສ່ຽງການເກີດລະບາດປະຈໍາວັນໃນແຕ່ລະຈຸດລວມທັງໂຮງໝໍເມືອງມີດັ່ງນີ້:

| ລໍາດັບ | ລາຍການ | ຈໍານວນບໍລິການສະສົມຜ່ານມາ | ຈໍານວນບໍລິການໃໝ່ | ຈໍານວນບໍລິການສະສົມທັງໝົດ |
|---|---|---|---|---|
| 1 | ຖອກທ້ອງເປັນນໍ້າກະທັນຫັນ | 480 | 6 | 486 |
| 2 | ຖອກທ້ອງມີມູກເປັນເລືອດ | 139 | 3 | 142 |
| 3 | ຊຶມເຊື້ອລະບົບຫາຍໃຈຮຸນແຮງ | 357 | 9 | 366 |
| 4 | ອາການຄ້າຍຄືໄຂ້ຫວັດ | 2268 | 43 | 2311 |
| 5 | ໄຂ້ອອກຕຸ່ມ | 10 | 0 | 10 |
| 6 | ໄຂ້ມາຣາເລຍ | 26 | 0 | 26 |
| 7 | ໄຂ້ແມງແດງ | 188 | 1 | 189 |
| 8 | ໄຂ້ທໍລະພິດ | 2 | 0 | 2 |
| 9 | ໄຂ້ບໍ່ຮູ້ສາເຫດ | 301 | 0 | 301 |
| 10 | ອາການເຫຼືອງກະທັນຫັນ | 0 | 0 | 0 |
| 11 | ໄຂ້ຍ່ຽວໝູ | 0 | 0 | 0 |
| 12 | ໄຂ້ຍູງລາຍ | 108 | 2 | 110 |
| 13 | ພະຍາດຜິວໜັງ | 284 | 1 | 285 |
| 14 | ພະຍາດຕາແດງ | 37 | 0 | 37 |
| 15 | ເບື່ອອາຫານ | 16 | 0 | 16 |
| | ລວມການບໍລິການ | **4,216** | 65 | **4,281** |

**ແປຜົນຂໍ້ມູນ:**

ອີງຕາມການສະຫຼຸບຕົວເລກຕັ້ງແຕ່ວັນທີ 24/07/2018 ເປັນຕົ້ນມາ ລາຍລະອຽດຕ່າງໆມີດັ່ງລຸ່ມນີ້:

- ພົບວ່າພະຍາດອາການຄ້າຍຄືໄຂ້ຫັວດ ມີກໍລະນີທັງໝົດ 2,198 ກໍລະນີ ຊຶ່ງມີທ່າອ່ຽງຫຼຸດລົງຈາກຕົວເລກລາຍງານ ແຕ່ວ່າຈຸດທີ່ມີຕົວເລກລາຍງານມື້ວານນີ້  ແຕ່ຕ້ອງຍັງຕ້ອງໃຫ້ສຸຂະສຶກສາແນະນໍາຄົນເຈັບປະຕິບັດຫຼັກການອະນາໄມ, ມີມາລະຍາດໄອຈາມ ແລະ ມີອາການຮ້າຍແຮງ ໃຫ້ໄປກວດຕື່ມຢູ່ໂຮງໝໍເມືອງ.
- ພະຍາດຖອກທ້ອງ ມີທັງໝົດ 478 ກໍລະນີ ເຊິ່ງເຫັນວ່າມີທ່າອ່ຽງຫຼຸດລົງ ທຽບຕົວເລກວັນທີ 14/09/2018 ແລະ ຜ່ານມາ ແມ່ນໄດ້ເກັບຕົວ່າງອາຈົມທັງໝົດ 10 ກໍລະນີ ແມ່ນບໍ່ພົບເຊື້ອທີ່ກໍ່ໃຫ້ເກີດພະຍາດຖອກທ້ອງ, ແຕ່ວ່າ ຕ້ອງໄດ້ເອົາໃຈໃສ່ຕິດຕາມເຝົ້າລະວັງ ແລະ ໃຫ້ສຸຂະສຶກສາກ່ຽວກັບວຽກງານ 3 ສະອາດ.
- ພະຍາດໄຂ້ແມງແດງ ມີທັງໝົດ 178 ກໍລະນີ ຈາກການສັງເກດເຫັນວ່າຈໍານວນກໍລະນີຫຼຸດລົງ ທຽບໃສ່ຕົວເລກວັນທີ 13/09/2018 ແລະ ຜ່ານມາ ໄດ້ເກັບຕົວຢ່າງເລືອດ ຈໍານວນ 05 ກໍລະນີ ແຕ່ບໍ່ພົບເຊື້ອ ຊຶ່ງຄົນເຈັບມານອນປິ່ນປົວຢູ່ໂຮງໝໍເມືອງ

- ພະຍາດໄຂ້ທໍລະພິດ ມີ ທັງໝົດ 2 ກໍລະນີ ແລະ ໄດ້ເກັບຕົວຢ່າງເລືອດ ແລະ ອາຈົມ ແຕ່ບໍ່ພົບເຊື້ອ SALMONELLA TYPHI, ຈາກການສັງເກດການເຫັນວ່າຈຳນວນມີທ່າອ່ຽງເທົ່າເດີມ, ແຕ່ໃຫ້ເອົາໃຈໃສ່ຕິດຕາມ, ເຝົ້າລະວັງ ແລະ ລາຍງານ.
- ພະຍາດໄຂ້ຍຸງລາຍ ມີທັງໝົດ 96 ກໍລະນີ ຊຶ່ງສົມທຽບໃສ່ຕົວເລກມື້ວານມີທ່າອ່ຽງຫຼຸດລົງ ແລະໄດ້ເຮັດສຸຂະສຶກສາຢູ່ຕາມແຕ່ລະຈຸດ ແລະໃນແຕ່ລະບ້ານໂດຍໃຊ້ລົດເຄື່ອນທີ່.
- ເບື່ອອາຫານ ມີທັງໝົດ 14 ກໍລະນີ ຈາກການສັງເກດການເຫັນວ່າຈຳນວນມີທ່າອ່ຽງຫຼຸດລົງ ທຽບໃສ່ຕົວເລກວັນທີ 13/9/2018, ຕ້ອງໄດ້ໃຫ້ສຸຂະສຶກສາກ່ຽວກັບອຽກງານ 3 ສະອາດ.

❖ **ມາດຖະການໃນການຄວບຄຸມພະຍາດວັນນະໂລກ**

| ລຳດັບ | ລາຍການ | ຈຳນວນບໍລິການສະສົມຜ່ານມາ | ຈຳນວນບໍລິການໃໝ່ | ຈຳນວນບໍລິການສະສົມທັງໝົດ |
|---|---|---|---|---|
| 1 | ເປົ້າໝາຍເຂົ້າຮ່ວມ | 1253 | 0 | 1253 |
| 2 | ກໍລະນີສົງໃສ | 184 | 0 | 184 |
| 3 | ຂຶ້ນທະບຽນປິ່ນປົວ | 60 | 0 | 60 |
| | ລວມການບໍລິການ | **1,497** | **0** | **1,497** |

## 3. ແຜນງານປິ່ນປົວ:

- **ການບໍລິການກວດ, ປິ່ນປົວສຸຂະພາບຢູ່ແຕ່ລະຈຸດບໍລິການ ໃນວັນທີ 16 ກັນຍາ 2018**

| ລຳດັບ | ຊື່ພະຍາດ | ຈຳນວນບໍລິການສະສົມຜ່ານມາ | | ຈຳນວນບໍລິການໃໝ່ | | ຈຳນວນບໍລິການສະສົມໃໝ່ | |
|---|---|---|---|---|---|---|---|
| | | ລວມ ສະສົມຜ່ານມາ | ແຍກເດັກລຸ່ມ 5ປີ | ລວມ ບໍລິການໃໝ່ | ແຍກເດັກລຸ່ມ 5ປີ | ລວມ ສະສົມໃໝ່ | ແຍກເດັກລຸ່ມ 5ປີ |
| 1 | ຖອກທ້ອງ | 340 | 56 | 0 | 1 | 340 | 57 |
| 2 | ຖອກທ້ອງມູກເລືອດ | 105 | 18 | 3 | 1 | 108 | 19 |
| 3 | ໄຂ້ຫວັດ | 2110 | 576 | 35 | 14 | 2145 | 590 |
| 4 | ລະບົບປະສາດ | 794 | 33 | 5 | 0 | 799 | 33 |
| 5 | ບາດແຜອະໄວຍະວະເພດ | 10 | 5 | 0 | 0 | 10 | 5 |
| 6 | ລະບົບຖ່າຍເທ | 57 | 2 | 2 | 0 | 59 | 2 |
| 7 | ພະຍາດຜິວໜັງ | 375 | 52 | 8 | 3 | 383 | 55 |
| 8 | ອະບັດຕານຄໍແດງ | 1449 | 393 | 31 | 11 | 1480 | 404 |
| 9 | ອັກເສບກ້າມຊີ້ນ | 246 | 8 | 2 | 0 | 248 | 8 |
| 10 | ຄວາມດັນເລືອດສູງ | 64 | 0 | 0 | 0 | 64 | 0 |
| 11 | ໄຂ້ແມງແດງ | 100 | 7 | 0 | 0 | 100 | 7 |
| 12 | ໂລກຈິດ | 5 | 1 | 0 | 0 | 5 | 1 |

| | | | | | | | |
|---|---|---|---|---|---|---|---|
| 13 | ລະບົບລະລາຍ | 965 | 65 | 10 | 1 | 975 | 66 |
| 14 | ອັກເສບປອດ | 401 | 110 | 4 | 3 | 405 | 113 |
| 15 | ກະທົບບາດແຜ | 108 | 12 | 1 | 0 | 109 | 12 |
| 16 | ພະຍາດກ່ຽວກັບຕາ | 58 | 3 | 0 | 0 | 58 | 3 |
| 17 | ອັກເສບລະບົບຫາຍໃຈ | 70 | 9 | 0 | 0 | 70 | 9 |
| 18 | ຜ່າຕັດນ້ອຍ | 116 | 7 | 7 | 0 | 123 | 7 |
| 19 | ແຂ້ວ | 53 | 8 | 1 | 0 | 54 | 8 |
| 20 | ແມ່ກາຝາກ | 73 | 18 | 1 | 0 | 74 | 18 |
| 21 | ຫູ ຕາ ດັງ ຄໍ | 101 | 23 | 1 | 0 | 102 | 23 |
| 22 | ໄຂ້ຍຸງລາຍ | 14 | 0 | 0 | 0 | 14 | 0 |
| 23 | ໄຂ້ຍຸງມາລາເລຍ | 10 | 1 | 1 | 0 | 11 | 1 |
| 24 | ພະຍາດຊຶມເຊື້ອຕ່າງໆ | 1 | 0 | 0 | 0 | 1 | 0 |
| 25 | ປະສູດ,ພະຍາດຍິງ | 130 | 0 | 2 | 0 | 132 | 0 |
| 26 | ອື່ນໆບໍ່ຮູ້ສາຍເຫດ | 738 | 48 | 11 | 1 | 749 | 49 |
| | ລວມ | 8,493 | 1,455 | 125 | 35 | 8,618 | 1,490 |

❖ **ລວມຄົນເຈັບໄພພິບັດແຕ່ວັນທີ່ 24 ກໍລະກົດ ຫາ 16 ກັນຍາ 2018**

| ລຳດັບ | ລາຍການ | ຈຳນວນບໍລິການ ສະສົມຜ່ານມາ | ຈຳນວນບໍລິການ ໃໝ່ | ຈຳນວນບໍລິການ ສະສົມທັງໝົດ |
|---|---|---|---|---|
| 1 | ຄົນເຈັບກວດເຂດນອກທັງໝົດ | 12,913 | 125 | 13,038 |
| 2 | ຄົນເຈັບກວດເຂດນອກໃນ13ບ້ານ | 5,981 | 82 | 6,063 |
| 3 | ຄົນເຈັບກວດເຂດນອກໃນ6ບ້ານ | 2,672 | 41 | 2,713 |
| 4 | ຄົນເຈັບນອນໂຮງໝໍໃນ13ບ້ານ | 367 | 2 | 369 |
| 5 | ຄົນເຈັບນອນໂຮງໝໍໃນ6ບ້ານ | 322 | 2 | 324 |
| 6 | ຄົນເຈັບມີໜ້າໃນໂຮງໝໍ | 895 | 28 | 923 |
| 7 | ຄົນເຈັບສົ່ງແຂວງ | 129 | 3 | 132 |

❖ ສົ່ງໂຮງໝໍແຂວງມີ 3 ກໍລະນີ

- ທ. ແອໃຫ່ຍ ອາຍຸ 3 ປີ ບ້ານ ທ່າເດື່ອ, ບົ່ງມະຕິ: ກະທົບແຂນເບື້ອງຂວາ.
- ນ. ກີ ອາຍຸ 4 ປີ ບ້ານ ທ່າຫີນ, ບົ່ງມະຕິ: Meliodosis.
- ນ. ນິ ອາຍຸ 1,9ເດືອນ ບ.ທ່າອອນ,ບົ່ງມະຕິ: pharngite + Meningite

❖ **ວຽກງານສຸຂະພາບຈິດ:**

| ລຳດັບ | ລາຍການພະຍາດລະບົບຈິດ | ສະສົມຮອດປະຈຸບັນ |
|---|---|---|
| 1 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງໃໝ່ | 0 |

| | | |
|---|---|---|
| 2 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງສະສົມ | 11 |
| 3 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງທີ່ໄດ້ຖືກຕິດຕາມ | 0 |
| 4 | ຈຳນວນຄົນທີ່ມີອາການໂສກເສົ້າຮຸນແຮງ ອາການດີຂຶ້ນ | 0 |
| 5 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດໃໝ່ | 0 |
| 6 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດ ສະສົມ | 244 |
| 7 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດໄດ້ຖືກຕິດຕາມ | 4 |
| 8 | ຈຳນວນຄົນຖືກບົ່ງມະຕິພະຍາດສຸຂະພາບຈິດ ອາການດີຂຶ້ນ | 1 |
| 9 | ຈຳນວນຄົນທີ່ມີຕ້ອງຕິດຕາມການດູແລ ປິ່ນປົວ | 72 |

## 4. ແຜນງານ ອາຫານ ແລະ ຢາ

<u>ວຽກງານດ້ານຢາ-ຜະລິດຕະພັນການແພດ:</u>

- ສືບຕໍ່ສັງລວມ, ຈັດລະບຽບ ພ້ອມກັບສະຫຼຸບການມອບ-ຮັບ ແລະ ຈ່າຍອອກ ຢາ ແລະ ຜະລິດຕະພັນ

ການແພດ ທີ່ໄດ້ຮັບການຊ່ວຍເຫຼືອ ຈາກພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນຕ່າງໆ ຢູ່ ພາຍໃນສາງ ຂະແໜງອາຫານ ແລະ ຢາ ແຂວງ ແລະ ເມືອງ

- ສືບຕໍ່ຂຶ້ນແຜນຈັດກຽມ ແລະ ຈັດຊື້ຢາຕາມລາຍການຢາທີ່ໄດ້ສະເໜີຂອງບັນດາແຂວງທີ່ຖືກຜົນກະທົບ ຈາກໄພນ້ຳຖ້ວມ

<u>ວຽກງານດ້ານອາຫານ:</u>

- ສືບຕໍ່ລົງຕິດຕາມກວດກາການເກັບມ້ຽນຜະລິດຕະພັນອາຫານທີ່ໄດ້ຮັບການຊ່ວຍເຫຼືອ ຢູ່ແຕ່ລະຈຸດເປັນ ປົກະຕິ
- ປະສານງານກັບຜູ້ຮັບຜິດຊອບສາງແຕ່ລະຈຸດຮັບ-ສົ່ງຜະລິດຕະພັນອາຫານ ເພື່ອລົງກວດກາ ໃນກໍລະນີທີ່ພົບບັນຫາ

## ອົງການຈັດຕັ້ງສາກົນ

### UNFPA

- ແມ່ນວາງແຜນໃນການກຳນົດຈັດຊຸດອົບຮົມ ວຽກງານປ້ອງການແມ່ຍິງ ໂດຍເນັ້ນໃສ່ວຽກງານສຸຂະພາບຈະເລີນພັນ ແລະ ປົກປ້ອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຢູ່ ແຂວງອັດຕະປື ໃນອາທິດທີ່1 ແລະ ອາທິດທີ 3 ຂອງ ເດືອນຕຸລາ 2018

## II. ຂໍ້ຕົກລົງຂອງກອງປະຊຸມ:

1. ມອບໃຫ້ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ເຮັດໜັງສືແຈ້ງການເລື່ອງຜົນຂອງການກວດທາດ ອາເຊນິກ ຢູ່ບ້ານປົ່ງດົງທັງ 8 ບໍ່ນ້ຳ ພ້ອມທັງເຮັດໜັງສືແນະນຳການນຳໃຊ້ບໍ່ນ້ຳໃຫ້ລະອຽດ ໂດຍສົມທົບກັບ ອົງການອະນາໄມໂລກ ແລ້ວສົ່ງໃຫ້ພະແນກແຂວງອັດຕະປື ໂດຍໄວ.
2. ມອບໃຫ້ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ແລະ ກົມຄວບຄຸມພະຍາດຕິດຕໍ່ ເປັນເຈົ້າການພົວພັນ ແລະ ໃຫ້ການຊ່ວຍເຫລືອບັນດາບ້ານຂອງສອງແຂວງ: ຫົວພັນ ແລະ ຊຽງຂວາງ ໂດຍສະເພາະ: ວິດຖ່າຍ, ນ້ຳສະອາດ,

ການສັກຢາກັນພະຍາດໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ, ຜູ້ສູງອາຍຸ ແລະ ການຕິດຕາມ, ຄວບຄຸມກັນພະຍາດຕິດຕໍ່ຕ່າງໆ ໂດຍດ່ວນ

3. ໃຫ້ ກົມປິ່ນປົວ ແລະ ຟື້ນຟູຫນ້າທີ່ການ ພົວພັນກັບອົງການ IOM ແລະພາກສ່ວນກ່ຽວຂ້ອງສ້າງແຜນການລະອຽດ (ການການົດຜູ້ເຂົ້າຮ່ວມ, ສະຖານທີ່ບ່ອນຈັດການອົບຮົມ ແລະ ອື່ນໆ) ກ່ຽວກັບການອົບຮົມວຽກງານສຸຂະພາບຈິດ ລວມທັງການເຮັດຫນັງສືເຊີນຄູຝຶກຈາກປະເທດໄທໃຫ້ສຳເລັດໂດຍໄວ ແລະ ຂໍທິດນຳການນຳກະຊວງສາທາເພື່ອຂໍອະນຸມັດການຈັດຈັ້ງປະຕິບັດ.

4. ມອບໃຫ້ ກົມຄວບຄຸມພະຍາດຕິດຕໍ່ ແລະ ສູນກ່ຽວຂ້ອງ ສືບຕໍ່ ປະເມີນຄົ້ນຄວ້າ, ສືບຫາ ໂດຍສະເພາະການເກີດພະຍາດໄຂ້ຍຸງເລືອດອອກ ແລະ ວາງມາດຕະການຕອບໂຕ້ຕໍ່.

5. ມອບໃຫ້ ກົມຄວບຄຸມພະຍາດຕິດຕໍ່ ກວດກາຄືນ ແລະ ມີມາດຕະການທີ່ດີກວ່າເກົ່າ ໃນການກຳຈັດຫນອນນ້ຳຍຸງລາຍ ແລະ ຍຸງ ຢູ່ບັນດາຈຸດພັກເຊົາຕ່າງໆຂອງເມືອງສະຫນາມໄຊ, ແຂວງອັດຕະປື ເພາະຈາກການສຳຫລວດເຫັນວ່າອັດຕາຄວາມຫນາແຫນ້ນຂອງຫນອນນ້ຳຍຸງລາຍແມ່ນສູງຫລາຍ ແລະ ຈ ຳນວນຄົນເຈັບເປັນພະຍາດໄຂ້ເລືອດອອກກໍ່ເພີ້ມຂື້ນ.

6. ມອບໃຫ້ ກົມອາຫານ ແລະ ຢາ ສົມທົບພະແນກສາທາແຂວງອັດຕະປື, ເມືອງສະຫນາມໄຊໃນການເກັບຢາທີ່ບໍ່ມີສະຫລາກ ແລະ ຄຳອະທິບາຍຕ່າງໆທີ່ໄດ້ແຈກຢາຍໃຫ້ປະຊາຊົນໃນເມື່ອກ່ອນນັ້ນຄືນໂດຍໄວ ເພື່ອຄວາມປອດໄພຂອງປະຊາຊົນ ແລະ ເຮັດບົດລາຍງານການປະຕິບັດວຽກງານດັ່ງກ່າວໃຫ້ ແຂວງ ແລະ ການນຳຮັບຊາບ.

7. ມອບໃຫ້ ກົມແຜນການເປັນເຈົ້າການສົມທົບກັບພາກສ່ວນຕ່າງໆໃນການສ້າງແຜນບູລິມາສິດເພື່ອປັບປຸງ, ຟື້ນຟູຫລັງໄພພິບັດນ້ຳຖ້ວມຢູ່ເມືອງສະຫນາມໄຊ, ແຂວງອັດຕະປື ແລະ ແຂວງອື່ນໆ ໃນທົ່ວປະເທດແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນໂດຍໄວເພາະປະຈຸບັນຍັງເຫລືອແຕ່ກະຊວງສາທາລະນະສຸກ ທີ່ຍັງບໍ່ໄດ້ສົ່ງເທື່ອ

**ຫົວຫນ້າຫ້ອງການ**

**ຫົວໜ້າກອງເລຂາຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດ**